ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທ່ານຜູ້ວ່າການ ທຫລ ສໍາເລັດການຕ້ອນຮັບ ຄະນະປະເມີນ ເສດຖະກິດມະຫາພາກຂອງກອງທຶນການເງິນສາກົນ



ໃນຕອນເຊົ້າຂອງວັນທີ 30 ມັງກອນ 2023 ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສໍາເລັດການຕ້ອນຮັບ ທ່ານ Alasdair Scott ຫົວໜ້າຄະນະວິຊາການປະເມີນເສດຖະກິດຂອງກອງທຶນການເງິນສາກົນ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາເຮັດວຽກ ແລະ ປະເມີນເສດຖະກິດຂອງ ສປປ ລາວ ປະຈໍາປີ 2022 ເຊິ່ງຈຸດປະສົງຫຼັກໃນການເຂົ້າພົບປະການນໍາ ທຫລ ຂອງຄະນະວິຊາການປະເມີນເສດຖະກິດຄັ້ງນີ້ ແມ່ນເປັນການແນະນໍາຕົວ, ບັນດາຈຸດປະສົງຫຼັກ ແລະ ບັນດາໜ້າວຽກທີ່ຄະນະຈະເຄື່ອນໄຫວໃນ ສປປ ລາວ ໃນໄລຍະການມາເຮັດວຽກ. ໃນນີ້, ທາງຄະນະວິຊາການປະເມີນເສດຖະກິດ ໄດ້ສະແດງຄວາມເປັນຫ່ວງຕໍ່ລະດັບໜີ້ສິນຂອງລັດຖະ ບານທີ່ສູງ, ດ້ານລາຍຮັບ-ລາຍຈ່າຍງົບປະມານ, ອັດຕາແລກປ່ຽນທີ່ອ່ອນຄ່າ ແລະ ອັດຕາເງິນເຟີ້.

ໃນການພົບປະດັ່ງກ່າວ ທ່ານຜູ້ວ່າການ ທຫລ ແມ່ນໄດ້ຕ້ອນຮັບຄະນະວິຊາການປະເມີນເສດຖະກິດດ້ວຍບັນຍາກາດທີ່ດີພ້ອມດຽວກັນນີ້, ກໍໄດ້ແລກປ່ຽນກ່ຽວກັບວິກິດການຂອງສາກົນ ລວມເຖິງຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຂອງ ສປປ ລາວ ທີ່ກໍາລັງປະເຊີນໃນປະຈຸບັນ ແລະ ຍັງໄດ້ແຈ້ງໃຫ້ຊາບວ່າ ລັດຖະບານແມ່ນຮັບຮູ້ບັນຫາທີ່ ກອງທຶນການເງິນສາກົນຍົກຂຶ້ນ ແລະ ກໍາລັງສຸມໃສ່ແກ້ໄຂບັນຫາດ້ວຍຫຼາຍມາດຕະການ. ໃນຕອນທ້າຍຂອງການພົບປະ ທ່ານຜູ້ວ່າການ ທຫລ ຍັງໄດ້ອວຍພອນໃຫ້ການມາເຮັດວຽກຢູ່ ສປປ ລາວ ຂອງຄະນະຄະນະວິຊາການປະເມີນເສດຖະກິດ ດໍາເນີນໄປດ້ວຍດີ ແລະ ປະສົບຜົນສໍາເລັດຕາມລະດັບຄາດໝາຍ.



ການປະເມີນເສດຖະກິດມະຫາພາກພາຍໃຕ້ມາດຕາ 4 ຂອງ IMF ແມ່ນດຳເນີນເປັນປົກກະຕິປີລະຄັ້ງ ແລະ ຄັ້ງນີ້ແມ່ນຄັ້ງທຳອິດທີ່ດຳເນີນແບບຊ່ອງໜ້າພາຍຫຼັງການແຜ່ລະບາດຂອງພະຍາດ ໂຄວິດ-19 ເຊິ່ງຄະນະວິຊາການປະເມີນເສດຖະກິດຂອງກອງທຶນການເງິນສາກົນ ຈະໄດ້ພົບປະ ແລະ ເຮັດວຽກຮ່ວມກັບຂະແໜງການປົ່ນອ້ອມເສດຖະກິດມະຫາພາກຂອງ ສປປ ລາວ.

ຂ່າວ: ກົມຮ່ວມມືສາກົນ

ພາບ: ຫ້ອງການ ທຫລ

ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ